ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0245/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 10/02/2020

# ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 1/2020.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“**ບໍລິສັດ**”) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານສະໄໝ ວິສາມັນ ຄັ້ງທີ 1/2020 ວັນທີ 07 ກຸມພາ 2020, ມີລາຍລະອຽດລຸ່ມນີ້:

1. ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ໃນວັນທີ **12/03/2020** ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນການແກ້ໄຂວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດ ຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມປະຊຸມດັ່ງກ່າວ.
2. ກຳນົດວັນປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ໃນວັນທີ **29/04/2020** ເວລາ **15:00** ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 01, ອາຄານສຳນັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນການແກ້ໄຂວັນ-ເວລາ ແລະ ສະຖານທີ່ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019.
3. ອະນຸມັດເບ້ຍປະຊຸມຂອງສະພາບໍລິຫານ, ກອງເລຂາສະພາບໍລິຫານ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານ ໂດຍຫລຸດຕົວຄູນຈາກ 2 ເດືອນ ເປັນ 1.5 ເດືອນ, ຊຶ່ງມີລາຍລະອຽດດັ່ງນີ້:
   1) ປະທານກອງປະຊຸມເທົ່າກັບ 100 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ);
   2) ຮອງປະທານສະພາບໍລິຫານເທົ່າກັບ 75 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ);
   3) ກຳມະການສະພາບໍລິຫານເທົ່າກັບ 50 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ);

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392

ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

4) ກອງເລຂາສະພາບໍລິຫານ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານເທົ່າກັບ 80 ສ່ວນຮ້ອຍ ຂອງເງິນເບ້ຍປະຊຸມກຳມະການສະພາບໍລິຫານ.

ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ເພື່ອພິຈາລະນາຮັບຮອງ.

4. ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ຄື: ບໍລິສັດ Pricewaterhouse Cooper (Lao) Sole Co., Ltd ເປັນຜູ້ກວດສອບບັນຊີແຕ່ປີ 2020 ຫາປີ 2022 ເນື່ອງຈາກວ່າບໍລິສັດດັ່ງກ່າວຊະນະການປະມູນ ໂດຍມີຄ່າຈ້າງ ຂອງຜູ້ກວດສອບບັນຊີສໍາລັບບັນຊີ ປີ 2020 ເປັນຈຳນວນເງິນບໍ່ເກີນ 701.215.000 ກີບ, ປີ 2021 ເປັນຈຳນວນເງິນບໍ່ເກີນ 722.500.000 ກີບ ແລະ ປີ 2022 ເປັນຈຳນວນເງິນບໍ່ເກີນ 744.049.000 ກີບ. ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ເພື່ອພິຈາລະນາຮັບຮອງ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**<u>ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່</u>**

ກະຊວງ ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນ ຫຼວງ ວຽງຈັນ

ລັດຕະນາ ປະທຸມວັນ